


# ອົງການຈັດຕັ້ງມະຫາຊົນ ຮາກຖານ ສາຂາ ທຫລ ພາກກາງ ລົງເຄື່ອນໄຫວເຜີຍແຜ່ພາລະບົດບາດ ຂອງທະນາຄານແຫ່ງ ສປປ ລາວ ຢູ່ຫ້ອງການເຂດເສດຖະກິດພິເສດ ສະຫວັນ-ເຊໂນ



ໃນຕອນບ່າຍຂອງວັນທີ 26 ກຸມພາ 2018 ເວລາ 13:30 ໂມງ ທີ່ຫ້ອງປະຊຸມຂອງຫ້ອງການເຂດເສດຖະກິດພິເສດ ສະຫວັນ-ເຊໂນ ທີ່ຜ່ານມາ, 3 ອົງການຈັດຕັ້ງມະຫາຊົນຮາກຖານ ສາຂາ ທຫລ ພາກກາງ ໄດ້ຈັດກອງປະຊຸມເຜີຍແຜ່ພາລະບົດບາດທະນາຄານແຫ່ງ ສປປ ລາວຂຶ້ນ, ເຊິ່ງຕາງໜ້າໃຫ້ແກ່ ສາຂາ ທຫລ.ສຂ ກໍ່ຄື 3 ອົງການຈັດຕັ້ງມະຫາຊົນຮາກຖານ ສາຂາ ທຫລ ພາກກາງໂດຍ ສະຫາຍ ສິນໄຊ ມະນີວັນ ຮອງເລຂາຊາວໜຸ່ມຮາກຖານ ພ້ອມຄະນະ ແລະ ຕາງໜ້າໃຫ້ແກ່ຫ້ອງການເຂດເສດຖະກິດພິເສດ ສະຫວັນ-ເຊໂນ ໂດຍທ່ານ ປານີ ບຸດສະດີ ຫົວໜ້າຫ້ອງການ ພ້ອມຄະນະ ແລະ ບັນດາທ່ານຜູ້ຕາງໜ້າຈາກບໍລິສັດໃນເຂດລົງທຶນ ເຂົ້າຮ່ວມຢ່າງພ້ອມພຽງ ໂດຍມີຜູ້ເຂົ້າຮ່ວມທັງໝົດ 35 ທ່ານ ຍິງ 19 ທ່ານ.

ຈຸດປະສົງໃນການຈັດກອງປະຊຸມເຜີຍແຜ່ໃນຄັ້ງນີ້, ຕົ້ນຕໍກໍ່ເພື່ອເຜີຍແຜ່ພາລະບົດບາດຂອງ ທຫລ ກໍ່ຄື ສາຂາ ທຫລ.ສຂ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສັງເກດທະນະບັດປອມ (ເງິນກີບ) ໃຫ້ແກ່ພະນັກງານກໍ່ຄືບັນດາສະມາຊິກ 3 ອົງການຈັດຕັ້ງມະຫາຊົນຂອງຫ້ອງການດັ່ງກ່າວ ໄດ້ຮັບຮູ້ ແລະ ເຂົ້າໃຈ, ພ້ອມທັງເປັນການແລກປ່ຽນບົດຮຽນການຈັດຕັ້ງປະຕິບັດວຽກງານວິຊາສະເພາະທີ່ຕິດພັນກັບຫົວຂໍ້ທີ່ໄດ້ເຜີຍແຜ່ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຄວາມເອກະພາບໃນຕໍ່ໜ້າ.

ຕະຫຼອດໄລຍະຂອງການດຳເນີນວາລະກອງປະຊຸມເຜີຍແຜ່, ຜູ້ເຂົ້າຮ່ວມທຸກທ່ານ ໄດ້ໃຫ້ຄວາມສົນໃຈຮັບຟັງ ເນື້ອໃນບັນດາຫົວຂໍ້ຂອງການນຳສະເໜີ ກໍ່ຄືການເຜີຍແຜ່ດ້ວຍຄວາມເອົາໃຈໃສ່ຢ່າງຈິດຈໍ່ ເຊິ່ງສະແດງອອກ ໄດ້ມີຄຳຖາມເຈາະຈີ້ມ ເພື່ອແລກປ່ຽນຄວາມຄິດເຫັນ ດ້ວຍບັນຍາກາດຟົດຟື້ນ.

ໃນຕອນທ້າຍຄະນະເຜີຍແຜ່ຍັງໄດ້ຝາກໃຫ້ບັນດາທ່ານທີ່ເຂົ້າຮ່ວມຮັບຟັງໃນຄັ້ງນີ້ ຊ່ວຍກັນນຳເອົາຂໍ້ມູນຕ່າງໆ ໄປເຜີຍແຜ່ໃຫ້ກັບຜູ້ທີ່ບໍ່ໄດ້ເຂົ້າຮ່ວມ, ພໍ່ແມ່ປະຊາຊົນ ໃນເວລາທີ່ລົງເຄື່ອນໄຫວວຽກງານຢູ່ທ້ອງຖິ່ນ ເພື່ອໃຫ້ທຸກຄົນເພີ່ມສະຕິລະວັງຕົວ ແລະ ເປັນຫູເປັນຕາໃນການແຈ້ງໃຫ້ກັບພາກສ່ວນລັດທີ່ກ່ຽວຂ້ອງ ຕໍ່ບັນດາວິສາຫະກິດທີ່ເຄື່ອນໄຫວລະດົມທຶນ ທີ່ບໍ່ຖືກຕ້ອງ ເພື່ອສ້າງໃຫ້ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ສະຫງົບສຸກ.

**ຂ່າວ-ພາບ: ເດດອາລຸນ ແສນທະວົງ**